# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

### ວັນອາທິດ ທີ 7 ຕຸລາ 2007 ( 10-07-2007 )

---

## <u>ຄຸນນະພາບແມ່ນອັນດັບນຶ່ງ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ມັດທາຍ 5:1-12)

**<u>ຄຳຖາມແຫ່ງຊີວິດ:</u>** ແມ່ນຫຍັງຄືແຫລ່ງທີ່ມາຂອງຄຸນນະພາບ ທີ່ເປັນຄຸນສົມບັດໃນຊີວິດຂອງຜູ້ທີ່ເຊື່ອ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ຜູ້ທີ່ເຊື່ອໄດ້ສະແດງອອກເຖິງຄຸນນະພາບຂອງຊີວິດຄຣິສຕຽນທີ່ໄດ້ຮັບພຣະພອນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານຕິດຕາມພຣະເຢຊູ ແລະດຳຣົງຊີວິດຕາມຄຳສອນຂອງພຣະອົງໂດຍ:

- ການອະທິບາຍເຖິງແຫລ່ງທີ່ມາຂອງຄຸນນະພາບໃນຊີວິດຂອງຜູ້ທີ່ເຊື່ອ ແລະ
- ສະແດງອອກເຖິງຄຸນນະພາບທີ່ທ່ານຕັ້ງໃຈໄວ້ວ່າຈະເຕີບໃຫຍ່ຂຶ້ນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລົ້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>** -ເລີ້ມຕົ້ນໂດຍ ອະທິບາຍຕົວຢ່າງທີ່ສຳຄັນຂອງພື້ນຖານຂອງຄຸນນະພາບ. ຕົວຢ່າງ: ຄຸນນະພາບຂອງເຂົ້າຈີ່ທີ່ມີກະປ່ອງອາຫານຍອງຢູ່ເທິງ ແລະ ຖ້າປຸກເຮືອນໃສ່ເທິງພື້ນດິນທີ່ບໍ່ດີແລ້ວຈະມີຫຍັງເກີດຂຶ້ນຕາມພາຍຫລັງ.

### 1. <u>ຮຽນຈາກພຣະເຢຊູຜູ້ເປັນອາຈານ:</u> (ທັດທາຍ 5:1-2)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ມັດທາຍ 5:1,2

2) ສັງເກດເບິ່ງຄຣູທີ່ດີທີ່ເຂົາມີມາກ່ອນ.

3) **ຖາມວ່າ:** (1) ແມ່ນຫຍັງທີ່ເຮັດໃຫ້ລາວມີລັກສະນະພິເສດ?

(2) ການເລີ້ມຕົ້ນເຂົ້າຮ່ວມການຮຽນນຳພຣະອາຈານທີ່ດີນັ້ນມີຄຸນນະພາບດີຫລືບໍ່?

(3) ຈຳເປັນບໍ່ທີ່ໃຫ້ມີການຮຽນເກີດຂື້ນ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** (ມັດທາຍ 5:1,2)

1. ການທີ່ອັຄສາວົກຕິດຕາມພຣະເຢຊູຂື້ນໄປເທິງພູນັ້ນທ່ານມີຄວາມຄິດແນວໃດ?
2. ອັຄສາວົກມີຄວາມຄາດຫວັງວ່າພຣະອົງຈະເຮັດຫຍັງຢູ່ເທິງພູນັ້ນ?
3. ຖ້າພຣະອົງຍັງທຳການເທສນາຢູ່ເທິງພູໃນສມັຍນີ້. ພຣະອົງຈະໃຊ້ສີລປະຢ່າງໃດມາອະທິບາຍ?
4. ແມ່ນຄວາມເຊື່ອໄວ້ວາງໃຈທີ່ດີທີ່ສຸດແບບໃດທີ່ທ່ານໄດ້ຮຽນຈາກພຣະເຢຊູ?

## 2. <u>ດຳເນີນຊີວິດໃນອີກດ້ານນຶ່ງ::</u> (ມັດທາຍ 5:3-10)

1) ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ມັດທາຍ 5:3-10 ໂດຍໃຫ້ຜູ້ນຶ່ງອ່ານ ຂໍ້ທີ 3 ຜູ້ທີສອງ ອ່ານຂໍ້ທີ 4 ແລະມາບັລຍາຍໃນຄຳອວຍພອນຂອງພຣະເຢຊູໃຫ້ທຸກຄົນເຂົ້າໃຈ.

2) **ຄຳຖາມ:** (1) ທ່ານຈະເຮັດແນວໃດຈະໃຫ້ພຣະເຈົ້າອວຍພອນຕາມຄວາມຕ້ອງການຂອງທ່ານ?

(2) ໃນຂໍ້ຄວາມທີ່ພຣະເຢຊູໃຫ້ຄຳອວຍພອນໄດ້ປ່ຽນທັສນະຄວາມຕ້ອງການຂອງທ່ານໄປຢ່າງໃດ?

3) ພຣະເຢຊູຄຣິດເຈົ້າໄດ້ຊົງສອນເຣື່ອງຄຸນນະພາບທີ່ສະງ່າຣາສີຊຶ່ງແຕກຕ່າງຈາກທາງຝ່າຍໂລກທີ່ຄາດຫວັງເອົາໄວ້ ແລະທັນມາເວົ້າເຖິງຊ່ວງຂອງຄຸນນະພາບຂອງຊີວິດອີກດ້ານນຶ່ງ. ຊຶ່ງຂັດກັບປະຊາຊົນ, ວັທນະທັມ ແລະຄວາມ ຄິດເຫັນຂອງຄົນໃນສມັຍນີ້. ຄຸນນະພາບທີ່ມີຄວາມປິຕິຍິນດີນີ້ແມ່ນພຣະເຢຊູເປັນຜູ້ໃຫ້ໂດຍທົ່ວໄປ. **ຖາມວ່າ:** ເຮັດ ແນວໃດທ່ານຈຶ່ງຈະມີຄວາມນອບນ້ອມຖ່ອມໃຈ ແລະຄວາມເຂັ້ມແຂງໃນເວລາດຽວກັນໄດ້?

4) ສົນທະນາຂອງຄຳວ່າ " ອຶດຫິວ, ຢາກນ້ຳ " ໃຫ້ໄດ້ຄວາມໝາຍຢ່າງຖືກຕ້ອງ. **ຖາມວ່າ:** ຄົນຂອງເຮົາທີ່ມີຄວາມ ຄວາມກະຫືອກະຫາຍແລ້ວເຮົາຄວນພັທນາຢ່າງໃດ?

5) ໃຫ້ມີຄວາມເມດຕາສົງສານນັ້ນໝາຍຄວາມວ່າແນວໃດ?

6) ທ່ານຈື່ໄດ້ບໍ່ວ່າທ່ານໄດ້ຮັບຄວາມເມດຕາເທື່ອແລ້ວນີ້ແມ່ນຫຍັງ?

7) ທ່ານມີຄວາມຮູ້ສຶກແນວໃດໃນເມື່ອທ່ານໄດ້ສະແດງຄວາມເມດຕາຕໍ່ຄົນອື່ນ?

8) ທະຫານເຄເປັນຜູ້ທີ່ສ້າງຄວາມສງົບບໍ່?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** (ມັດທາຍ 5:3-10)

1. ບັນດາອັຄສາວົກທັງຫລາຍໄດ້ຮັບການອວຍພຣະພອນຂອງພຣະເຢຊູຄຣິດດ້ວຍວິທີໃດ?
2. ໂລກໄດ້ມີພຶດຕິກັມຢ່າງໃດຕໍ່ຜູ້ທີ່ມີຄວາມເຫລື້ອມໃສສັດທາໃນພຣະເຈົ້າດ້ວຍພຣະຄຸນຂອງພຣະຄຣິດ?
3. ທ່ານໄດ້ຮັບການອວຍພອນໂດຍພຣະເຢຊູຄຣິດໃນທາງໃດ?
4. ທ່ານຈະໃຫ້ກຳລັງໃຈແກ່ຜູ້ທີ່ໄດ້ຮັບການອວຍພອນຈາກພຣະເຢຊູຄຣິດທີ່ໂລກເຂົ້າໃຈຜິດຕໍ່ລາວນັ້ນໄດ້ແນວໃດ?

## 3. <u>ເຕັມໃຈທີ່ຈະທົນທຸກເພື່ອຊີວິດໃນພຣະເຈົ້າ:</u> (ມັດທາຍ 5:11-12

1) ຂໍໃຫ້ນັກຮຽນອາສາສມັກອ່ານ ມັດທາຍ 5:11,12

2) **ແນະນຳ: "ການອວຍພຣະພອນ"** ຄຸນນະພາບຂອງການອວຍພຣະພອນຜ່ານທາງພຣະເຢຊູເປັນພື້ນຖານອີກຝ່າຍ ນຶ່ງໃນຊີວິດທີ່ມອບໃຫ້ແກ່ບັນດາຜູ້ທີ່ເຊື່ອ.

3) **ຄຳຖາມ:** (1) ເປັນຫຍັງການທົນທຸກທໍລະມານ ແລະ ການກ່າວຫາວ່າໂທດຈຶ່ງມີແກ່ບັນດາຜູ້ທີ່ເຊື່ອ?
(2) ທ່ານຈະມີຄວາມຊົມຊື່ນຍິນດີໄດ້ແນວໃດໃນເມື່ອທ່ານມີຄວາມທຸກທໍລະມານຍ້ອນພີ່ນ້ອງຂອງທ່ານ ກ່າວຫາວ່າ(ດູຫມິ່ນ)ພຣະເຢຊູຕໍ່ໜ້າທ່ານ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ມັດທາຍ 5:11-12

1. ຄົນໃນໂລກສມັຍນີ້ໄດ້ຄັດຄ້ານ (ເປັນປໍຣະປັກ) ຕໍ່ຜູ້ທີ່ດຳເນີນຊີວິດເພື່ອພຣະເຢຊູຢ່າງໃດແດ່?
2. ເປັນຫຍັງພຣະເຢຊູຈຶ່ງວ່າ " ຄຣິສຕຽນມີຄວາມຊົມຊື່ນຍິນດີໄດ້ໃນເມື່ອຢູ່ໃນຄວາມທົນທຸກທໍລະມານທາງຖ້ອຍຄຳ ຫລືທາງຮ່າງກາຍ ເພາະເຫດວ່າໄດ້ຜູກພັນກັບພຣະເຢຊູນັ້ນ?
3. ທ່ານຮູ້ຈັກໃຜແດ່ທີ່ມີຄວາມທຸກທໍລະມານ ເພາະເຫັນແກ່ພຣະເຢຊູຄຣິດ?
4. ທ່ານຈະເລົ້າໂລມໃຈຄົນນັ້ນດ້ວຍພຣະຄຳທີ່ມາຈາກການສິດສອນຂອງພຣະເຢຊູນັ້ນໄດ້ຢ່າງໃດ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ພຣະເຢຊູຄຣິດພ້ອມທີ່ຈະສິດສອນຜູ້ທີ່ເຂົ້າມາຫາພຣະອົງ ແລະພ້ອມທີ່ຈະຮຽນຈາກພຣະອົງ.
- ບັນດາຜູ້ທີ່ເຊື່ອທັງຫລາຍໄດ້ສະສົມຄວາມສັດທາເຫລື້ອມໃສຄຸນນະພາບທີ່ພຣະເຢຊູຊົງສັ່ງສອນໄວ້ ຢ່າງດີ, ແຕ່ໂລກໄດ້ດູຖູກ ດູໝິ່ນ.
- ພຣະເຈົ້າຊົງພໍພຣະທັຍນຳຜູ້ທີ່ສ້າງດຳເນີນຊີວິຕາມພື້ນຖານຂອງພຣະເຈົ້າ ພຣະອົງໄດ້ຊົງຮັບປະກັນໄວ້ຢ່າງ ດີທີ່ສຸດ, ບໍ່ວ່າເຂົາຈະຢູ່ໃນຖານະໃດກໍຕາມ.
- ຄວາມເຊື່ອຢ່າງສຸດຈິດສຸດໃຈນັ້ນຈະມີຄຸນຄ່າອັນລົ້ນເຫລືອ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH